Revision 18.6.2022

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ລັດຖະບານ ເລກທີ /ລບ

ນະຄອນຫຼວງວຽງຈັນ, ວັນທີ

# (ຮ່າງ) ດຳລັດ

# ວ່າດ້ວຍເຂດ ແລະ ນິຄົມອຸດສາຫະກຳ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ສະບັບເລກທີ 48/ສພຊ, ລົງວັນທີ 27 ທັນວາ 2013;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບເລກທີ 14/ສພຊ, ລົງວັນທີ 17 ພະຈິກ 2016;
- ອີງຕາມກົດໝາຍວ່າດ້ວຍທີ່ດິນ ສະບັບເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມກົດໝາຍວ່າດ້ວຍຜັງເມືອງ ສະບັບເລກທີ 40/ສພຊ, ລົງວັນທີ 16 ພະຈິກ 2017;
- ອີງຕາມໜັງສືສະເໜີ ຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ……… …

## ລັດຖະບານ ອອກດຳລັດ:

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສ້າງຕັ້ງ, ການເຄື່ອນໄຫວ ແລະ ການຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກຳ ເພື່ອດຶງດູດການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ວຍການວາງນະໂຍບາຍສົ່ງເສີມໃນການສ້າງຕັ້ງ, ພັດທະນາເຂດ ແລະ ນິຄົມອຸດສາຫະກຳ ພ້ອມດ້ວຍການລົງທຶນກິດຈະການໂຮງງານຕ່າງໆ ແນໃສ່ເຮັດໃຫ້ການລົງທຶນມີຄວາມສະດວກ, ວ່ອງໄວ, ຖືກຕ້ອງ ແລະ ສອດຄ່ອງຕາມນະໂຍບາຍການພັດທະນາຕາມທິດສີຂຽວ ຮັບປະກັນຜົນປະໂຫຍດຂອງລັດ, ປະຊາຊົນ, ຜູ້ພັດທະນາ ແລະ ຜູ້ລົງທຶນ ທັງເປັນການສົ່ງເສີມການຜະລິດ ສະໜອງແກ່ການຊົມໃຊ້ພາຍໃນ ແລະ ສົ່ງອອກຕ່າງປະເທດ ປະກອບ ສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ແລະ ສ້າງລາຍຮັບໃຫ້ແກ່ງົບປະມານ ແຫ່ງຊາດ.

**ມາດຕາ 2 ເຂດ ແລະ ນິຄົມອຸດສາຫະກຳ**

ເຂດອຸດສາຫະກຳ ແມ່ນ ເຂດພື້ນທີ່ດິນທີ່ໄດ້ສະຫງວນ ຫຼື ຈັດສັນໄວ້ ສຳລັບການສ້າງຕັ້ງໂຮງງານອຸດສາຫະກຳ ຫຼື ກິດຈະການອື່ນ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳ ທີ່ໄດ້ຮັບການຮັບຮອງຢ່າງເປັນທາງການຈາກລັດຖະບານ.

ນິຄົມອຸດສາຫະກຳ ແມ່ນ ເນື້ອທີ່ດິນທີ່ໄດ້ພັດທະນາລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກເຊັ່ນ: ລະບົບເສັ້ນທາງ, ລະບາຍນ້ຳ, ບຳບັດສິ່ງເສດເຫຼືອ, ປ້ອງກັນນ້ຳຖ້ວມ, ໄຟຟ້າ, ນ້ຳປະປາ, ໂທລະຄົມມະນາຄົມ, ອາຄານ,

ສາງ ແລະ ສິ່ງອຳນວຍຄວາມສະດວກອື່ນ ທີ່ຈຳເປັນ ເພື່ອຮັບໃຊ້ແກ່ການດຳເນີນກິດຈະການໂຮງງານອຸດສາຫະກຳ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ພັດທະນາ** ໝາຍເຖິງ ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດຈາກລັດຖະບານ ແຫ່ງ ສປປ ລາວ ໃຫ້ລົງ ທຶນພັດທະນາລະບົບໂຄງລ່າງພື້ນຖານທາງດ້ານເຕັກນິກຂອງນິຄົມອຸດສາຫະກຳ;
2. **ຜູ້ລົງທຶນ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຮັບອະນຸຍາດລົງທຶນ ແລະ ຈົດທະບຽນວິສາຫະກິດ ເພື່ອດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການໃນນິຄົມອຸດສາຫະກຳ ຢ່າງຖືກ ຕ້ອງຕາມກົດໝາຍ;
3. **ສິ່ງອຳນວຍຄວາມສະດວກອື່ນ** ໝາຍເຖິງ ບັນດາກິດຈະການທີ່ສະໜັບສະໜູນໃຫ້ແກ່ການລົງ ທຶນໃນນິຄົມອຸດສາຫະກຳ ເປັນຕົ້ນ ຮ້ານຄ້າ, ສະຖານທີ່ພັກເຊົາ ແລະ ການບໍລິການອື່ນໆ;
4. **ໃບອະນຸຍາດນຳໃຊ້ທີ່ດິນ** ໝາຍເຖິງ ເອກະສານມອບສິດນຳໃຊ້ທີ່ດິນໃນເຂດ ແລະ ນິຄົມອຸດສາ ຫະກຳ ອອກໂດຍພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ, ຫ້ອງການຄຸ້ມຄອງບໍລິ ຫານນິຄົມອຸດສາຫະກຳ ໃຫ້ຜູ້ລົງທຶນຕາມໄລຍະເວລາການເຊົ່າ.
5. **ການລົງທຶນໂດຍລັດຖະບານຮ້ອຍສ່ວນຮ້ອຍ** ໝາຍເຖິງລັດຖະບານເປັນຜູ້ສະໜອງທຶນທັງໝົດ ໃນການພັດ ທະນານິຄົມອຸດສາຫະກຳ ແລະ ຄຸ້ມຄອງບໍລິຫານໂດຍການຈັດຕັ້ງລັດ ຕາມກົນໄກການສ້າງຕັ້ງ ແລະ ການພັດ ທະນານິຄົມອຸດສາຫະກຳ ທີ່ກຳນົດໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.
6. **ລັດລົງທຶນຮ່ວມກັບເອກະຊົນພາຍໃນ ຫຼື ຕ່າງປະເທດ** ໝາຍເຖິງ ການລົງທຶນຮ່ວມກັນລະ ຫວ່າງລັດຖະບານແຫ່ງ ສປປ ລາວ ກັບຜູ້ລົງທຶນພາຍໃນ ຫຼື ຕ່າງປະເທດ ເພື່ອພັດທະນານິຄົມອຸດສາ ຫະກຳໂດຍກຳນົດສິດ ແລະ ພັນທະຂອງແຕ່ລະຝ່າຍ ໃນສັນຍາການຮ່ວມມື.
7. **ເອກະຊົນລົງທຶນຮ້ອຍສ່ວນຮ້ອຍ** ໝາຍເຖິງ ການລົງທຶນ ເພື່ອພັດທະນານິຄົມອຸດສາຫະກຳຂອງເອກະຊົນພາຍໃນ ຫຼື ເອກະຊົນຕ່າງປະເທດ ຫຼື ການຮ່ວມທຶນລະຫວ່າງເອກະຊົນພາຍໃນກັບຕ່າງປະ ເທດ ຊຶ່ງບໍ່ມີການລົງທຶນຮ່ວມຂອງລັດຖະບານ.

**ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບເຂດ ແລະ ນິຄົມອຸດສາຫະກຳ**

ລັດຊຸກຍູ້ສົ່ງເສີມບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນເສດຖະກິດທັງພາຍໃນ ແລະຕ່າງປະເທດລົງທຶນເຂົ້າໃນການພັດທະນາເຂດ ແລະ ນິຄົມອຸດສາຫະກຳ.

ລັດສ້າງເງື່ອນໄຂອຳນວຍຄວາມສະດວກ ແລະ ວາງນະໂຍບາຍ ຊຸກຍູ້ສົ່ງເສີມການພັດທະນາ, ການລົງທຶນ, ການດຳເນີນກິດຈະການໂຮງງານ ແລະ ການບໍລິການ ໃນເຂດ ແລະ ນິຄົມອຸດສາຫະກຳ ເພື່ອການພັດທະນາອຸດສາຫະກຳປຸງແຕ່ງໃຫ້ກວ້າງຂວາງ ແລະ ກ້າວໄປສູ່ທັນສະໄໝ ຕາມທິດອຸດສາຫະກຳສີຂຽວ ແນໃສ່ສົ່ງເສີມການຜະລິດ, ການພັດທະນາດ້ານເຕັກໂນໂລຊີ, ແກ້ໄຂວຽກເຮັດງານທຳໃຫ້ປະຊາຊົນບັນດາເຜົ່າ ແລະ ສ້າງແຫຼ່ງລາຍຮັບ ຮັບປະກັນການພັດທະນາໄປສູ່ເຂດແຄວ້ນ ແລະ ທ້ອງຖິ່ນ, ສ້າງພື້ນຖານເສດຖະກິດ ໃຫ້ມີຄວາມໝັ້ນຄົງ ແລະ ຂະຫຍາຍຕົວຢ່າງຕໍ່ເນື່ອງ.

**ມາດຕາ 5 ຫຼັກການ ການເຄື່ອນໄຫວວຽກງານຂອງ ເຂດ ແລະ ນິຄົມອຸດສາຫະກຳ**

ການເຄື່ອນໄຫວວຽກງານຂອງ ເຂດ ແລະ ນິຄົມອຸດສາຫະກຳ ໃຫ້ປະຕິບັດຕາມຫຼັກການພື້ນຖານ ດັ່ງນີ້:

1. ສອດຄ່ອງກັບນະໂຍບາຍ ແລະ ກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ຍຸດທະສາດການພັດທະນາອຸດສາຫະກຳປຸງແຕ່ງ ແລະ ການຄ້າ;

2. ເຄົາລົບ ແລະ ປະຕິບັດກົດໝາຍ, ສົນທິສັນຍາ ແລະ ນະໂຍບາຍສົ່ງເສີມຕາມດຳລັດສະບັບນີ້;
3. ຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ຕາມກົນໄກການບໍລິການປະຕູດຽວ;
4. ປົກປ້ອງສິດ ແລະ ຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ຜູ້ລົງທຶນ;
5. ຮັບປະກັນຄວາມໝັ້ນຄົງທາງເສດຖະກິດຂອງຊາດ, ຄວາມສະຫງົບ ແລະ ຄວາມປອດໄພພາຍໃນນິຄົມອຸດສາຫະກຳ, ຄວາມປອດໄພຂອງສັງຄົມ ແລະ ສິ່ງແວດລ້ອມ;
6. ຮັບປະກັນການພັດທະນາແບບຍືນຍົງ, ສົ່ງເສີມ ແລະ ອະນຸລັກວັດທະນາທຳອັນດີງາມຂອງຊາດ.

**ມາດຕາ 6 ຂອບເຂດການນຳໃຊ້**

ດຳລັດສະບັບນີ້ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ກ່ຽວກັບການສ້າງຕັ້ງ, ການພັດທະນາ, ການລົງທຶນໃນເຂດ ແລະ ນິຄົມອຸດສາຫະກຳ ຢູ່ ສປປ ລາວ.

**ມາດຕາ 7 ການຮ່ວມມືສາກົນ**

ລັດ ສົ່ງເສີມ ການພົວພັນຮ່ວມມື ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບການພັດທະນາເຂດ ແລະ ນິຄົມອຸດສາຫະກຳ ດ້ວຍການແລກປ່ຽນບົດຮຽນ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ປະສົບການ ໃນການສົ່ງເສີມ ແລະ ການຄຸ້ມຄອງການລົງທຶນ, ການຄ້າ, ແຮງງານ, ແຫຼ່ງທຶນ ເພື່ອຍົກລະດັບຄວາມຮູ້ຄວາມສາມາດທາງດ້ານວິຊາການ ເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິຜົນ ໂດຍສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ.

## ພາກທີ II
## ເຂດອຸດສາຫະກຳ

**ມາດຕາ 8 ການກຳນົດ ແລະ ພັດທະນາເຂດອຸດສາຫະກຳ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບພະແນກການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສຶກສາ, ສຳຫຼວດ, ຄັດເລືອກ, ກຳນົດຂອບເຂດດິນ ທີ່ເໝາະສົມເພື່ອເປັນເຂດອຸດສາຫະກຳ ແລ້ວນຳສະເໜີອົງການປົກຄອງຂັ້ນແຂວງພິຈາລະນາຮັບຮອງ ແລະ ດຳເນີນການຫັນປ່ຽນປະເພດທີ່ດິນ ຕາມຂອບເຂດສິດທີ່ກຳນົດໃນກົດໝາຍວ່າດ້ວຍທີ່ດິນ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ສ້າງແຜນພັດທະນາເຂດອຸດສາຫະກຳ ເພື່ອພັດທະນາລະບົບໂຄງລ່າງພື້ນຖານ ຮອງຮັບການລົງທຶນສ້າງຕັ້ງໂຮງງານ ແລະ ກິດຈະການສະໜັບສະໜູນ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳປຸງແຕ່ງ.

**ມາດຕາ 9 ການທົດແທນຄ່າເສຍຫາຍ**

ເຂດອຸດສາຫະກຳ ຫາກກວມເອົາທີ່ດິນຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງລັດ ຕ້ອງທົດແທນຄ່າເສຍຫາຍ ຕາມກົດໝາຍ ແລະ ລະບຽບການ.

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ເປັນເຈົ້າການປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ ຂື້ນແຜນການຊົດເຊີຍ-ເວນຄືນ ເພື່ອທົດແທນຄ່າເສຍຫາຍ ຕໍ່ຜູ້ໄດ້ຮັບຜົນກະທົບຈາກການກຳນົດ ແລະ ພັດທະນາເຂດອຸດສາຫະກຳ.

**ມາດຕາ 10 ການອອກໃບແຜນທີ່ດິນລັດເຂດອຸດສາຫະກຳ**

ຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ອອກໃບແຜນທີ່ດິນລັດ ໃຫ້ແກ່ຂະແໜງອຸດສາຫະກຳ ແລະ ການຄ້າ ເພື່ອຄຸ້ມຄອງ ແລະ ນຳໃຊ້ ຕາມແຜນພັດທະນາເຂດອຸດສາຫະກຳ.

ພະແນກອຸດສາຫະກຳ ແລະ ການຄ້າ ເປັນຜູ້ຄົ້ນຄວ້າ ແລະ ອະນຸຍາດ ການນຳໃຊ້ທີ່ດິນໃນເຂດອຸດສາຫະກຳ ທີ່ໄດ້ອອກໃບແຜນທີ່ດິນລັດ ຕາມການສະເໜີຂອງຜູ້ລົງທຶນ.

**ມາດຕາ 11 ການລົງທຶນໃນເຂດອຸດສາຫະກຳ**

ບຸກຄົນ ຫຼື ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງຂໍລົງທຶນ ໃນເຂດອຸດສາຫະກຳ ເພື່ອສ້າງຕັ້ງໂຮງງານ ແລະ ກິດຈະການສະໜັບສະໜູນ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳປຸງແຕ່ງ ໃຫ້ສະເໜີຕໍ່ຂະແໜງອຸດສາຫະກຳ ແລະ ການຄ້າ ຫຼື ຂະແໜງການກ່ຽວຂ້ອງ ເພື່ອປະຕິບັດຕາມຂັ້ນຕອນການລົງທຶນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ພາກທີ III
## ການພັດທະນາ ແລະ ການລົງທຶນໃນນິຄົມອຸດສາຫະກຳ

### ໝວດທີ 1
### ການພັດທະນານິຄົມອຸດສາຫະກຳ

**ມາດຕາ 12 ການພັດທະນານິຄົມອຸດສາຫະກຳ**

ລັດຖະບານ ເປັນຜູ້ພິຈາລະນາຕົກລົງສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳ ຕາມການສະເໜີຂອງຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ບົນພື້ນຖານການຄົ້ນຄວ້າຂອງກະ ຊວງອຸດສາຫະກຳ ແລະ ການຄ້າ ໂດຍມີການສົມທົບກັບກະຊວງ ແລະ ອົງການອື່ນໆທີ່ກ່ຽວຂ້ອງ.

**ມາດຕາ 13 ຮູບການພັດທະນານິຄົມອຸດສາຫະກຳ**

ການລົງທຶນພັດທະນານິຄົມອຸດສາຫະກຳ ມີ ສາມ ຮູບການ ຄື:

1. ລັດຖະບານລົງທຶນ ຮ້ອຍສ່ວນຮ້ອຍ;
2. ລັດລົງທຶນຮ່ວມກັບເອກະຊົນພາຍໃນ ຫຼື ຕ່າງປະເທດ;
3. ເອກະຊົນລົງທຶນຮ້ອຍສ່ວນຮ້ອຍ.

**ມາດຕາ 14 ເງື່ອນໄຂຂອງຜູ້ພັດທະນານິຄົມອຸດສາຫະກຳ**

ຜູ້ພັດທະນານິຄົມອຸດສາຫະກຳ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນນິຕິບຸກຄົນ;
2. ມີວັດຖຸປະສົງຈະແຈ້ງ ແລະ ກຳນົດອາຍຸການພັດທະນາທີ່ຊັດເຈນເໝາະສົມຕາມແຕ່ລະຂະໜາດຂອງນິຄົມອຸດສາຫະກຳ;
3. ມີຖານະທາງດ້ານການເງິນ ຫຼື ແຫຼ່ງທຶນ ຊຶ່ງໄດ້ຮັບການຢັ້ງຢືນຈາກສະຖາບັນການເງິນ ພາຍໃນ ຫຼື ຕ່າງປະເທດ;
4. ມີປະສົບການ ແລະ ໄດ້ຮັບຜົນສຳເລັດໃນການດຳເນີນທຸລະກິດ;
5. ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ ຫຼື ລົງໂທດຕັດອິດສາລະພາບ ຍ້ອນການກະທຳຜິດໂດຍເຈດຕະນາ.

**ມາດຕາ 15 ການສະເໜີຂໍພັດທະນານິຄົມອຸດສາຫະກຳ**

ນິຕິບຸກຄົນ ທີ່ມີຈຸດປະສົງ ສ້າງຕັ້ງ ແລະ ພັດທະນານິຄົມອຸດສາຫະກຳ ໃຫ້ຍື່ນຄຳຮ້ອງພ້ອມດ້ວຍເອກະສານຄົບຊຸດ ຕໍ່ຫ້ອງການບໍລິການລົງທຶນປະຕູດຽວຂັ້ນສູນກາງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**ມາດຕາ 16 ເອກະສານປະກອບຂໍອະນຸຍາດພັດທະນານິຄົມອຸດສາຫະກຳ**

ເອກະສານປະກອບຂໍອະນຸຍາດພັດທະນານິຄົມອຸດສາຫະກຳ ມີດັ່ງນີ້:

1. ໃບຄຳຮ້ອງຂໍອະນຸຍາດພັດທະນານິຄົມອຸດສາຫະກຳ;
2. ປະຫວັດ ແລະ ປະສົບການຂອງຜູ້ທີ່ຈະພັດທະນານິຄົມອຸດສາຫະກຳ;
3. ໃບທະບຽນວິສາຫະກິດ;
4. ສັນຍາຮ່ວມພັດທະນາ ໃນກໍລະນີມີການຮ່ວມທຶນ;
5. ໃບຢັ້ງຢືນຖານະການເງິນ ຫຼື ເອກະສານສະໜັບສະໜູນ ຈາກສະຖາບັນການເງິນ;
6. ແຜນພັດທະນານິຄົມອຸດສາຫະກຳ ແລະ ບົດວິພາກເສດຖະກິດ-ເຕັກນິກເບື້ອງຕົ້ນ;
7. ແຜນວາດເບື້ອງຕົ້ນ ເນື້ອທີ່ດິນຂອງໂຄງການ.

**ມາດຕາ 17 ຂັ້ນຕອນການອະນຸຍາດພັດທະນານິຄົມອຸດສາຫະກຳ**

ການອະນຸຍາດພັດທະນານິຄົມອຸດສາຫະກຳ ມີຂັ້ນຕອນ ດັ່ງນີ້:

1. ພາຍຫຼັງໄດ້ຮັບຄຳຮ້ອງຂໍອະນຸຍາດພັດທະນານິຄົມອຸດສາຫະກຳ ຫ້ອງການບໍລິການການລົງທຶນປະຕູດຽວຂັ້ນສູນກາງ ນຳສົ່ງສຳນວນເອກະສານໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການຄົ້ນຄວ້າ ໂດຍປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງ ແລ້ວນຳສະເໜີຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເພື່ອຄົ້ນຄວ້າ ແລະ ນຳສະເໜີຕໍ່ລັດຖະບານ ພິຈາລະນາອະນຸມັດເຊັນບົດບັນທຶກຄວາມເຂົ້າໃຈ ສຶກສາຄວາມເປັນໄປໄດ້;
2. ຜູ້ພັດທະນານິຄົມອຸດສາຫະກຳ ດຳເນີນການສຶກສາຄວາມເປັນໄປໄດ້ ແລະ ກະກຽມເອກະສານ ກ່ຽວກັບການພັດທະນານິຄົມອຸດສາຫະກຳ ໃຫ້ຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ກຳນົດໄວ້ໃນບົດບັນ ທຶກຄວາມເຂົ້າໃຈ ໂດຍປະສານສົມທົບກັບ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ພາກສ່ວນກ່ຽວຂ້ອງ ໃຫ້ສຳເລັດ ພາຍໃນ ສິບສອງ ເດືອນ;
3. ພາຍຫຼັງສຳເລັດ ດຳເນີນການສຶກສາຄວາມເປັນໄປໄດ້ ກະຊວງອຸດສາຫະກຳ ແລະ ການຄ້າ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຮັບຮອງເອົາບົດລາຍງານການສຶກສາຄວາມເປັນໄປໄດ້ ແລ້ວລາຍງານຕໍ່ຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ເພື່ອນຳສະເໜີຕໍ່ລັດຖະບານ ພິຈາລະນາອະນຸມັດ ເຊັນສັນຍາພັດທະນາ.

**ມາດຕາ 18 ການຈັດສັນທີ່ດິນໃນນິຄົມອຸດສາຫະກຳ**

ຜູ້ພັດທະນາເປັນຜູ້ຈັດສັນເນື້ອທີ່ດິນ ໃນນິຄົມອຸດສາຫະກຳເປັນຕອນ ແລ້ວສະເໜີຕໍ່ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ແຂວງ, ນະຄອນຫຼວງ ບ່ອນນິຄົມຕັ້ງຢູ່ ເພື່ອອອກໃບອະນຸຍາດນຳໃຊ້ທີ່ດິນ ເປັນແຕ່ລະຕອນ ໃຫ້ຜູ້ລົງທຶນ ເຊົ່າ ຫຼື ຊື້ ສິດນຳໃຊ້ທີ່ດິນດັ່ງກ່າວ ຕາມກຳນົດເວລາ ທີ່ກຳນົດໃນສັນຍາພັດທະນານິຄົມອຸດສາຫະກຳ.

**ມາດຕາ 19 ການນຳໃຊ້ພື້ນທີ່ດິນໃນນິຄົມອຸດສາຫະກຳ**

ຜູ້ພັດທະນາ ນຳໃຊ້ພື້ນທີ່ດິນ ທີ່ຕົນໄດ້ສິດນັ້ນ ເຂົ້າໃນເປົ້າໝາຍການດຳເນີນທຸລະກິດໂດຍກົງ ແມ່ນບໍ່ໃຫ້ເກີນ ແປດສິບສ່ວນຮ້ອຍ ຂອງເນື້ອທີ່ທັງໝົດ, ສ່ວນທີ່ເຫຼືອໃຫ້ພັດທະນາເປັນພື້ນທີ່ສາທາລະນະປະໂຫຍດ.

**ມາດຕາ 20 ສິດຂອງຜູ້ພັດທະນານິຄົມອຸດສາຫະກຳ**

ຜູ້ພັດທະນານິຄົມອຸດສາຫະກຳມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ອໍານວຍຄວາມສະດວກໃນການພັດທະນານິຄົມອຸດສາຫະກໍາ ຕາມທີ່ໄດ້ກໍານົດໄວ້ໃນດໍາລັດສະບັບນີ້, ກົດວ່າດ້ວຍອຸດສາຫະກໍາປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາ ທີ່ໄດ້ມາຈາກການລົງທຶນຕາມກົດໝາຍ ແລະ ລະບຽບການ;
3. ເປັນເຈົ້າກໍາມະສິດຕໍ່ຊັບສິນ ທີ່ຕົນໄດ້ພັດທະນານິຄົມອຸດສາຫະກໍາ ເປັນຕົ້ນ ເສັ້ນທາງ, ລະບົບລະບາຍນໍ້າ, ລະບົບບໍາບັດສິ່ງເສດເຫຼືອ, ລະບົບປ້ອງກັນນໍ້າຖ້ວມ, ໄຟຟ້າ, ນໍ້າປະປາ, ໂທລະຄົມມະນາຄົມ, ອາຄານ, ສະຖານທີ່ພັກເຊົາ, ສາງ ແລະ ສິ່ງອໍານວຍຄວາມສະດວກອື່ນ ທີ່ຈໍາເປັນ;
4. ນໍາໃຊ້ທີ່ດິນຂອງຕົນ ຫຼື ນໍາໃຊ້ດິນທີ່ໄດ້ເຊົ່າ ແລະ ສໍາປະທານ ຕາມອາຍຸສັນຍາພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
5. ພັດທະນາໂຄງລ່າງພື້ນຖານ ແລະ ສິ່ງອໍານວຍຄວາມສະດວກ ລວມທັງການຈັດສັນຕອນດິນໃນນິຄົມອຸດສາຫະກໍາ ເພື່ອພັດທະນາໄປຕາມແຜນການທີ່ກໍານົດໄວ້ ຫຼື ບົດວິພາກເສດຖະກິດເຕັກນິກ ທີ່ໄດ້ຮັບຮອງຈາກພາກສ່ວນທີ່ກ່ຽວຂ້ອງ;
6. ໄດ້ຮັບສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 21 ພັນທະຂອງຜູ້ພັດທະນານິຄົມອຸດສາຫະກໍາ**

ຜູ້ພັດທະນານິຄົມອຸດສາຫະກໍາ ມີພັນທະດັ່ງນີ້:

1. ສ້າງຕັ້ງບໍລິສັດ ເພື່ອດໍາເນີນໂຄງການຕາມສັນຍາພັດທະນາ;
2. ນໍາທຶນເຂົ້າມາພັດທະນານິຄົມອຸດສາຫະກໍາ ຕາມຈໍານວນ ແລະ ໄລຍະເວລາທີ່ໄດ້ກໍານົດໄວ້;
3. ຄຸ້ມຄອງບໍລິຫານທຸລະກິດ, ໂຄສະນາ ແລະ ດຶງດູດການລົງທຶນເຂົ້າໃນນິຄົມອຸດສາຫະກໍາ;
4. ພັດທະນາສີມືແຮງງານລາວ ເພື່ອສະໜອງໃຫ້ໂຮງງານໃນນິຄົມອຸດສາຫະກໍາ ຕາມແຜນຄວາມຕ້ອງການ ແລະ ຄວາມເໝາະສົມແຕ່ລະໄລຍະ;
5. ມີສ່ວນຮ່ວມ ຫຼື ປະກອບສ່ວນໃນການພັດທະນາຊຸມຊົນເຂດບ້ານໃກ້ຄຽງກັບນິຄົມອຸດສາຫະກໍາຕາມຄວາມເໝາະສົມ;
6. ສ້າງເງື່ອນໄຂໃຫ້ວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງໃຫ້ສາມາດສະໜອງການບໍລິການ ໃຫ້ແກ່ການລົງທຶນພາຍໃນນິຄົມອຸດສາຫະກໍາ;
7. ຖືບັນຊີຕາມກົດໝາຍວ່າດ້ວຍການບັນຊີ ໃນກໍລະນີຈໍາເປັນ ສາມາດນໍາໃຊ້ລະບົບບັນຊີສາກົນ ແຕ່ຕ້ອງໄດ້ຮັບການເຫັນດີຈາກຂະແໜງການເງິນ;
8. ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການໃຫ້ລັດຖະບານຄົບຖ້ວນ ທັນຕາມກໍານົດເວລາ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ, ກົດໝາຍ ແລະ ລະບຽບການ;
9. ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ລັດ ໃນການຄຸ້ມຄອງຕິດຕາມກວດກາການລົງທຶນ ໃນນິຄົມອຸດສາຫະກໍາ ແລະ ລາຍງານຜົນຄວາມຄືບໜ້າໃນການພັດທະນາປະຈໍາປີ ໃຫ້ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ຫຼື ພະແນກອຸດສາຫະກໍາ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນນິຄົມຕັ້ງຢູ່;
10. ປະຕິບັດພັນທະອື່ນ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ.

## ໝວດທີ 3
## ການລົງທຶນໃນນິຄົມອຸດສາຫະກໍາ

**ມາດຕາ 22 ການລົງທຶນໃນນິຄົມອຸດສາຫະກຳ**

ການລົງທຶນໃນນິຄົມອຸດສາຫະກຳ ປະກອບມີ ດັ່ງນີ້:

1. ກິດຈະການໃນບັນຊີຄວບຄຸມ;
2. ກິດຈະການບໍ່ຢູ່ໃນບັນຊີຄວບຄຸມ.

**ມາດຕາ 23 ກິດຈະການໃນບັນຊີຄວບຄຸມ**

ຜູ້ລົງທຶນທີ່ຕ້ອງການລົງທຶນ ໃນກິດຈະການບັນຊີຄວບຄຸມ ໃຫ້ປະກອບເອກະສານສະເໜີຜ່ານຫ້ອງການບໍລິຫານຄຸ້ມຄອງນິຄົມອຸດສາຫະກຳ ແຂວງ, ນະຄອນຫຼວງ ບ່ອນນິຄົມອຸດສາຫະກຳຕັ້ງຢູ່ ເພື່ອສະເໜີຂໍອະນຸມັດການລົງທຶນໃນບັນຊີຄວບຄຸມຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 24 ກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ**

ຜູ້ລົງທຶນທີ່ຕ້ອງການລົງທຶນໃນກິດຈະການ ທີ່ບໍ່ຢູ່ໃນບັນຊີຄວບຄຸມ ໃຫ້ປະກອບເອກະສານສະເໜີຫາຫ້ອງການບໍລິຫານຄຸ້ມຄອງນິຄົມອຸດສາຫະກຳ ແຂວງ, ນະຄອນຫຼວງ ບ່ອນນິຄົມອຸດສາຫະກຳຕັ້ງຢູ່ ເພື່ອຄົ້ນຄວ້າພິຈາລະນາອອກທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ.

ໃນກໍລະນີກິດຈະການທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ ພາຍຫຼັງທີ່ອອກທະບຽນວິສາຫາກິດແລ້ວ ຫ້ອງການບໍລິຫານຄຸ້ມຄອງນິຄົມອຸດສາຫະກຳ ແຂວງ, ນະຄອນຫຼວງ ຕ້ອງຂໍຄຳເຫັນຈາກຂະແໜງການທີ່ກ່ຽວຂ້ອງພາຍໃນ 10 ວັນລັດຖະການນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງເປັນຕົ້ນໄປ, ຖ້າບໍ່ມີຄາຕອບພາຍໃນ 10 ວັນຖືວ່າເປັນການເຫັນດີ.

**ມາດຕາ 25 ການຍື່ນຄຳຮ້ອງຂໍລົງທຶນ**

ບຸກຄົນ, ນິຕິບຸກຄົນທັງພາຍໃນ ແລະ ຕ່າງປະເທດ ທີ່ມີຈຸດປະສົງລົງທຶນຢູ່ໃນນິຄົມອຸດສາຫະກຳ ໃຫ້ຍື່ນຄຳຮ້ອງຕໍ່ຫ້ອງການບໍລິຫານຄຸ້ມຄອງນິຄົມອຸດສາຫະກຳ ແຂວງ, ນະຄອນຫຼວງ ບ່ອນທີ່ນິຄົມຕັ້ງຢູ່.

**ມາດຕາ 26 ເອກະສານປະກອບໃນການຂໍອະນຸຍາດລົງທຶນໃນນິຄົມອຸດສາຫະກຳ**

ເອກະສານປະກອບໃນການຂໍອະນຸຍາດລົງທຶນໃນນິຄົມອຸດສາຫະກຳ ປະກອບມີ ດັ່ງນີ້:

1. ໃບຄຳຮ້ອງຂໍລົງທຶນ;
2. ສັນຍາດຳເນີນທຸລະກິດກັບຜູ້ພັດທະນາ ຫຼື ເອກະສານຢັ້ງຢືນການນຳໃຊ້ທີ່ດິນ;
3. ສັນຍາສ້າງຕັ້ງບໍລິສັດ(ຖ້າມີການຮ່ວມທຶນ);
4. ບົດວິພາກເສດຖະກິດເຕັກນິກ ຫຼື ແຜນດຳເນີນທຸລະກິດ (ຖ້າຫາກມີຄວາມຈຳເປັນ)
5. ບົດປະເມີນຜົນກະທົບເບື້ອງຕົ້ນ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ (ຖ້າຫາກມີຄວາມຈຳເປັນ)
6. ກົດລະບຽບຂອງບໍລິສັດ;
7. ເອກະສານຢັ້ງຢືນຖານະການເງິນ.

**ມາດຕາ 27 ການພິຈາລະນາກິດຈະການທີ່ບໍ່ຢູ່ໃນບັນຊີຄວບຄຸມ**

ພາຍຫຼັງໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ຕາມທີ່ກຳນົດໄວ້ໃນມາດຕາ 32 ຂອງດຳລັດສະບັບນີ້ ຫ້ອງການບໍລິຫານຄຸ້ມຄອງນິຄົມອຸດສາຫະກຳ ແຂວງ, ນະຄອນຫຼວງ ບ່ອນທີ່ນິຄົມອຸດສາຫະກຳຕັ້ງຢູ່ ເພື່ອພິຈາລະນາອອກທະບຽນວິສາຫະກິດ ພາຍໃນສາມວັນລັດຖະການ.

ໃນກໍລະນີກິດຈະການທີ່ຕ້ອງຂໍອະນຸຍາດດຳເນີນທຸລະກິດ, ພາຍຫຼັງທີ່ອອກທະບຽນວິສາຫາກິດແລ້ວຫ້ອງການບໍລິຫານຄຸ້ມຄອງນິຄົມອຸດສາຫະກຳ ແຂວງ, ນະຄອນຫຼວງ ຕ້ອງນຳສົ່ງເອກະສານຫາຂະແໜງການທີ່ກ່ຽວຂ້ອງ ເພື່ອຂໍຄຳເຫັນ ແລະ ແຈ້ງຕອບພາຍໃນ ສິບວັນລັດຖະການນັບແຕ່ວັນໄດ້ຮັບເອກະສານ, ຖ້າບໍ່ມີການແຈ້ງຕອບພາຍໃນ ສິບວັນຖືວ່າເປັນການເຫັນດີ.

**ມາດຕາ 28 ສິດຂອງຜູ້ລົງທຶນນິຄົມອຸດສາຫະກຳ**

ຜູ້ລົງທຶນໃນນິຄົມອຸດສາຫະກຳ ມີສິດ ດັ່ງນີ້:

1. ໄດ້ຮັບນະໂຍບາຍສົ່ງເສີມ ແລະ ອຳນວຍຄວາມສະດວກໃນການພັດທະນານິຄົມອຸດສາຫະກຳ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
2. ໄດ້ຮັບການສົ່ງເສີມ ແລະ ອຳນວຍຄວາມສະດວດໃນການລົງທຶນກິດຈະການ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຈາກການລົງທຶນ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
4. ນຳໃຊ້ທີ່ດິນຕາມສັນຍາລົງທຶນກິດຈະການ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
5. ເປັນເຈົ້າກຳມະສິດ ຕໍ່ຊັບສິນໃນການລົງທຶນກິດຈະການຂອງຕົນ;
6. ຄຸ້ມຄອງບໍລິຫານ ແລະ ດຳເນີນທຸລະກິດ ຕາມແຜນທຸລະກິດທີ່ກຳນົດ ຫຼື ບົດວິພາກເສດຖະກິດເຕັກນິກ ທີ່ໄດ້ຮັບຮອງ;
7. ໂອນເງິນທີ່ໄດ້ຮັບຈາກການດຳເນີນທຸລະກິດອອກນອກປະເທດ ໂດຍສອດຄ່ອງຕາມຂັ້ນຕອນຂອງກົດໝາຍ ແລະ ລະບຽບການກຳນົດ;
8. ໄດ້ຮັບສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 29 ພັນທະຂອງຜູ້ລົງທຶນນິຄົມອຸດສາຫະກຳ**

ຜູ້ລົງທຶນໃນນິຄົມອຸດສາຫະກຳ ມີພັນທະດັ່ງນີ້:

1. ນຳທຶນເຂົ້າມາລົງທຶນ ຕາມຈຳນວນ ແລະ ໄລຍະເວລາທີ່ໄດ້ກຳນົດໄວ້;
2. ສ້າງເງື່ອນໄຂ ຫຼື ກົນໄກໃນການຍົກລະດັບສີມືແຮງງານລາວ ໂດຍສະເພາະແຮງງານໃນພື້ນທີ່ຂອບເຂດໃກ້ຄຽງໃຫ້ສາມາດເຂົ້າເຮັດວຽກໃນໂຮງງານຂອງຕົນເອງໄດ້;
3. ວາງແຜນການ ແລະ ເອົາໃຈໃສ່ພັດທະນາສີມືແຮງງານ ຕາມແຜນຄວາມຕ້ອງການ ແລະ ຄວາມເໝາະສົມແຕ່ລະໄລຍະ;
4. ປະຕິບັດພັນທະຕ່າງໆ ໂດຍສະເພາະ ພັນທະດ້ານພາສີ, ອາກອນ ແລະ ຄ່າທຳນຽມອື່ນໆ ຕາມກົດໝາຍ ແລະ ລະບຽບການກຳນົດ ໃຫ້ຄົບຖ້ວນ ແລະ ທັນຕາມກຳນົດເວລາ;
5. ໃຫ້ຄວາມຮ່ວມມືແກ່ເຈົ້າໜ້າທີ່ລັດ ແລະ ຜູ້ພັດທະນາໃນການຄຸ້ມຄອງຕິດຕາມການລົງທຶນໃນນິຄົມອຸດສາຫະກຳ ແລະ ລາຍງານຜົນຄວາມຄືບໜ້າໃນການລົງທຶນ ໃຫ້ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ຊາບໃນແຕ່ລະໄລຍະ;
6. ປະຕິບັດພັນທະອື່ນ ຕາມກົດໝາຍ ແລະ ລະບຽບການ.

## ພາກທີ IV
## ການຄຸ້ມຄອງວຽກງານ ແລະ ການບໍລິການ ການລົງທຶນ ໃນນິຄົມອຸດສາຫະກຳ

### ໝວດທີ 1
### ການຄຸ້ມຄອງວຽກງານໃນນິຄົມອຸດສາຫະກຳ

ມາດຕາ 30 ການຄຸ້ມຄອງວຽກງານໃນນິຄົມອຸດສາຫະກຳ

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ເປັນຜູ້ຄຸ້ມຄອງວຽກງານໃນນິຄົມອຸດສາຫະກຳ ປະກອບມີໜ່ວຍງານ, ເຮັດໜ້າທີ່ບໍລິການປະຕູດຽວ ແລະ ມີການປະທັບເປັນຂອງຕົນເອງ ເພື່ອຄຸ້ມຄອງວຽກງານການລົງທຶນ, ການບໍລິການ ແລະ ອໍານວຍຄວາມສະດວກແກ່ການພັດທະນາໃນນິຄົມອຸດສາຫະກຳ.

ໃນກໍລະນີ ແຂວງ, ນະຄອນຫລວງ ບ່ອນທີ່ນິຄົມອຸດສາຫະກຳຕັ້ງຢູ່ຫາກຍັງບໍ່ມີຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ແມ່ນມອບໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ບ່ອນທີ່ນິຄົມອຸດສາຫະກຳຕັ້ງຢູ່ ເປັນຜູ້ຄຸ້ມຄອງວຽກງານໃນນິຄົມອຸດສາຫະກຳ ຕາມສິດ ແລະ ໜ້າທີ່ ທີ່ໄດ້ກຳນົດໄວ້ໃນມາດຕາ 53 ຂອງດຳລັດສະບັບນີ້.

**ມາດຕາ 31 ການສ້າງຕັ້ງຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ**

ການສ້າງຕັ້ງຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ແມ່ນກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາສ້າງຕັ້ງ ຕາມການສະເໜີຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ພາຍຫຼັງທີ່ນິຄົມອຸດສາຫະກຳໄດ້ມີການລົງທຶນຢ່າງໜ້ອຍ ຫ້າ ບໍລິສັດຂຶ້ນໄປ.

ຫົວໜ້າຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ມີຕຳແໜ່ງບໍລິຫານ ປະເພດ 4 ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ບົນພື້ນຖານການປຶກສາຫາລື ແລະ ເອກະພາບກັບເຈົ້າແຂວງ, ເຈົ້ານະຄອນຫຼວງ ບ່ອນນິຄົມອຸດສາຫະກຳຕັ້ງຢູ່.

ຮອງຫົວໜ້າຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

ວຽກງານວິຊາການ, ບຸກຄະລາກອນ, ງົບປະມານ ຂອງຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ແມ່ນຂຶ້ນກັບພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ.

## ໝວດທີ 2
## ການບໍລິການ ການລົງທຶນໃນນິຄົມອຸດສາຫະກຳ

**ມາດຕາ 32 ການບໍລິການ ລົງທຶນໃນນິຄົມອຸດສາຫະກຳ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ເປັນຜູ້ອຳນວຍຄວາມສະດວກໃຫ້ແກ່ການລົງທຶນໃນນິຄົມອຸດສາຫະກຳ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຕາມສິດ ແລະ ໜ້າທີ່ຂອງຕົນ ດັ່ງນີ້:

1. ການອອກໃບທະບຽນວິສາຫະກິດ,ໃບອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດດຳເນີນກິດຈະການໂຮງງານ;
2. ການຢັ້ງຢືນການນຳເຂົ້າ-ສົ່ງອອກ;
3. ການຢັ້ງຢືນແຫຼ່ງກຳເນີດສິນຄ້າ;
4. ການອະນຸຍາດນຳໃຊ້ທີ່ດິນ ແລະ ອະສັງຫະລິມະຊັບ;
5. ການອະນຸຍາດປຸກສ້າງ;
6. ການຢັ້ງຢືນສິ່ງແວດລ້ອມໂຮງງານ;
7. ການສະເໜີຂໍການອະນຸມັດຄວັດຕາປະທັບ;
8. ການແຈ້ງເສຍອາກອນ, ແຈ້ງພາສີການນຳເຂົ້າ-ສົ່ງອອກ;
9. ການເກັບຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມກົດໝາຍ ແລະ ລະບຽບການ;
10. ການຄຸ້ມຄອງແຮງງານ, ການເຂົ້າອອກ ສປປ ລາວ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນໃນນິຄົມອຸດສາຫະກຳ;
11. ບໍລິການອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 33 ການຮັກສາຄວາມສະຫງົບໃນນິຄົມອຸດສາຫະກໍາ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພື່ອຮັບປະກັນວຽກງານປ້ອງກັນຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍພາຍໃນ ແລະ ອ້ອມຮອບນິຄົມອຸດສາຫະກໍາ.

**ມາດຕາ 34 ການເກັບກໍາຂໍ້ມູນສະຖິຕິ ໃນນິຄົມອຸດສາຫະກໍາ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ຕ້ອງມີລະບົບຕິດຕາມ ການເກັບກໍາຂໍ້ມູນກ່ຽວກັບການພັດທະນາ ແລະ ລົງທຶນໃນນິຄົມອຸດສາຫະກໍາ ລວມທັງຂໍ້ມູນສະຖິຕິອື່ນ ທີ່ຈໍາເປັນ ເພື່ອຮັບປະກັນໃຫ້ລະບົບລາຍງານມີຄວາມຖືກ ແລະ ທັນເວລາ.

**ມາດຕາ 35 ການເກັບລາຍຮັບໃນນິຄົມອຸດສາຫະກໍາ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ປະສານສົມທົບກັບຂະແໜງການເງິນ, ສ້າງເງື່ອນໄຂອໍານວຍຄວາມສະດວກ ໃນການເກັບລາຍຮັບເຂົ້າງົບປະມານແຫ່ງລັດ ໃຫ້ຄົບຖ້ວນ, ວ່ອງໄວ ແລະ ຖືກຕ້ອງ ພ້ອມທັງສະຫຼຸບລາຍງານຜົນໄດ້ຮັບ ໃນແຕ່ລະໄລຍະ.

**ມາດຕາ 36 ການພັດທະນາສີມືແຮງງານໃນນິຄົມອຸດສາຫະກໍາ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ຮ່ວມກັບຜູ້ພັດທະນາ ແລະ ຜູ້ລົງທຶນ ສັງລວມຄວາມຕ້ອງການແຮງງານ ໃນແຕ່ລະໄລຍະ, ປະສານສົມທົບກັບຂະແໜງການແຮງງານ ແລະ ສະຫວັດດີການສັງຄົມ, ຂະແໜງສຶກສາທິການ ແລະ ກິລາ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ເພື່ອພັດທະນາສີມືແຮງງານ ສະໜອງໃຫ້ນິຄົມອຸດສາຫະກໍາ ໃຫ້ພຽງພໍຕາມຄວາມຕ້ອງການ.

**ມາດຕາ 37 ການຄຸ້ມຄອງແຮງງານໃນນິຄົມອຸດສາຫະກໍາ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ປະສານສົມທົບກັບຜູ້ພັດທະນາ ແລະ ຜູ້ລົງທຶນ ເກັບກໍາສະຖິຕິແຮງງານ ເປັນແຕ່ລະໄລຍະ ເພື່ອຄຸ້ມຄອງ, ປົກປ້ອງ, ສຶກສາອົບຮົມ ແລະ ຊຸກຍູ້ຜູ້ອອກແຮງງານ ພາຍໃນນິຄົມອຸດສາຫະກໍາ ແລະ ອ້ອມຂ້າງ ປະຕິບັດສັນຍາແຮງງານ, ລະບອບປະກັນສັງຄົມ, ກົດໝາຍ, ລະບຽບການ ແລະ ພັນທະອື່ນໆ ກ່ຽວກັບແຮງງານ.

**ມາດຕາ 38 ການປົກປັກຮັກສາສິ່ງແວດລ້ອມໃນນິຄົມອຸດສາຫະກໍາ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ຕ້ອງຕິດຕາມ, ກວດກາ ແລະ ຊຸກຍູ້ ຜູ້ພັດທະນາ ແລະ ຜູ້ລົງທຶນ ປົກປັກຮັກສາສິ່ງແວດລ້ອມ, ສັງຄົມ, ວັດທະນະທໍາ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ, ບົດວິພາກເສດຖະກິດເຕັກນິກ, ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ຕາມກົດໝາຍ ແລະ ບຽບການ.

**ມາດຕາ 39 ການປະກອບສ່ວນເຂົ້າໃນການພັດທະນາຊຸມຊົນ**

ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກໍາ ຍູ້ຜູ້ພັດທະນາ ແລະ ຜູ້ລົງທຶນ ປະກອບສ່ວນເຂົ້າໃນການພັດທະນາຊຸມຊົນທ້ອງຖິ່ນ ເປັນຕົ້ນ ການປູກຝັງ, ການລ້ຽງສັດ, ການຜະລິດເຄື່ອງຫັດຖະກໍາ, ການປະກອບອາຊີບ ແລະ ອື່ນໆ.

## ພາກທີ V
## ນະໂຍບາຍສົ່ງເສີມການພັດທະນາ ແລະ ການລົງທຶນໃນນິຄົມອຸດສາຫະກໍາ

### ໝວດທີ 1
### ນະໂຍບາຍສົ່ງເສີມຕໍ່ຜູ້ພັດທະນານິຄົມອຸດສາຫະກໍາ

ມາດຕາ 40 ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ

ຜູ້ພັດທະນານິຄົມອຸດສາຫະກຳ ໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນ ດັ່ງນີ້:

1. ໄດ້ຮັບນະໂຍບາຍຍົກເວັ້ນດ້ານພາສີ, ອາກອນມູນຄ່າເພີ່ມຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ກ່ຽວກັບການນຳເຂົ້າ ວັດຖຸປະກອນ, ພາຫະນະກົນຈັກ ເພື່ອກໍ່ສ້າງພື້ນຖານໂຄງລ່າງໃນນິຄົມອຸດສາຫະກຳ ເປັນຕົ້ນ ການກໍ່ສ້າງເສັ້ນທາງ, ລະບົບໄຟຟ້າ, ນ້ຳປະປາ, ລະບົບປ້ອງກັນນ້ຳຖ້ວມ, ອັກຄີໄພ, ຄວາມປອດໄພ, ການບຳບັດນ້ຳເປື້ອນ, ສິ່ງເສດເຫຼືອ, ອາຄານ, ທີ່ຢູ່ອາໄສ, ສາງ ແລະ ອື່ນໆ ພ້ອມນີ້ໄດ້ຮັບນະໂຍບາຍຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໄດ້ຮັບການຍົກເວັ້ນອາກອນມູນຄ່າເພີ່ມ ສຳລັບການກໍ່ສ້າງ ແລະ ພັດທະນາພື້ນຖານໂຄງລ່າງ ຮັບໃຊ້ການດຳເນີນທຸລະກິດຂອງຜູ້ລົງທຶນໃນນິຄົມອຸດສາຫະກຳເປັນຕົ້ນ ການກໍ່ສ້າງເສັ້ນທາງ, ລະບົບໄຟຟ້າ, ນ້ຳປະປາ, ລະບົບບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອ, ສ່ວນການກໍ່ສ້າງພື້ນຖານໂຄງລ່າງອື່ນໆ ແມ່ນໃຫ້ເສຍຫ້າສິບສ່ວນຮ້ອຍ (50%) ຂອງອັດຕາອາກອນມູນຄ່າເພີ່ມ ທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ;
3. ໄດ້ຮັບນະໂຍບາຍສົ່ງເສີມດ້ານອາກອນກຳໄລໂດຍອີງຕາມເຂດ ທີ່ໄດ້ກຳໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ຄື: ເຂດ 1 ຍົກເວັ້ນອາກອນກຳໄລ ສິບຫົກ ປີ ແລະ ເຂດ 2 ຍົກເວັ້ນອາກອນກຳໄລ ແປດ ປີ, ພາຍຫຼັງສິ້ນສຸດໄລຍະຍົກເວັ້ນ ຈະໄດ້ເສຍ ສາມສິບຫ້າສ່ວນຮ້ອຍ (35%) ຂອງອັດຕາອາກອນກຳໄລ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍສ່ວຍສາອາກອນ ພາຍໃນກຳນົດ ຫ້າ ປີ, ຫຼັງຈາກນັ້ນ ໃຫ້ເສຍໃນອັດຕາຕາມທີ່ໄດ້ກຳນົດໄວ້ ໃນກົດໝາຍວ່າດ້ວຍ ສ່ວຍສາອາກອນ.

ມາດຕາ 41 ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບ

ຜູ້ພັດທະນານິຄົມອຸດສາຫະກຳ ມີສິດນຳໃຊ້ທີ່ດິນໃນນິຄົມອຸດສາຫະກຳຕາມອາຍຸການຂອງສັນຍາ ແລະ ມີສິດນຳເອົາສິດດັ່ງກ່າວ ໃຫ້ເຊົ່າຕໍ່, ມອບ, ໂອນ ໃຫ້ຜູ້ລົງທຶນຕາມອາຍຸຂອງສັນຍາພັດທະນາ ພາຍຫຼັງທີ່ໄດ້ພັດທະນາສຳເລັດແລ້ວ ຢ່າງໜ້ອຍ (45%) ຂອງແຜນພັດທະນາໃນແຕ່ລະໄລຍະ ຕາມທີ່ກຳນົດໄວ້ໃນແຜນແມ່ບົດການພັດທະນາ ໂດຍມີການຢັ້ງຢືນຈາກພາກສ່ວນທີ່ກ່ຽວຂ້ອງ.

ຜູ້ພັດທະນານິຄົມອຸດສາຫະກຳ ເປັນເຈົ້າຂອງກຳມະສິດອະສັງຫາລິມະຊັບຕະຫຼອດຈົນໝົດອາຍຸການນຳໃຊ້ອະສັງຫາລິມະຊັບນັ້ນ ຊຶ່ງສາມາດຂາຍ, ມອບ, ໂອນ ຫຼື ສືບທອດຕໍ່ໄດ້, ສ່ວນທີ່ດິນບ່ອນທີ່ອະສັງຫາລິມະຊັບນັ້ນຕັ້ງຢູ່ ເມື່ອໝົດອາຍຸສັນຍາພັດທະນາແລ້ວ ແມ່ນຕົກເປັນຊັບສິນຂອງລັດ ຫຼື ຂອງເຈົ້າກຳມະສິດທີ່ດິນ ຊຶ່ງເຈົ້າກຳມະສິດຂອງອະສັງຫາລິມະຊັບນັ້ນ ສາມາດເຊົ່າຕໍ່ທີ່ດິນດັ່ງກ່າວ ຫຼື ດ້ວຍວິທີການອື່ນທີ່ຖືກຕ້ອງຕາມກົດໝາຍ.

ສຳລັບຜູ້ພັດທະນານິຄົມອຸດສາຫະກຳ ເປັນເຈົ້າກຳມະສິດທີ່ດິນຮ້ອຍສ່ວນຮ້ອຍ ຈະໄດ້ຮັບນະໂຍບາຍການເສຍຄ່າທຳນຽມການນຳໃຊ້ທີ່ດິນ ຕາມການຕົກລົງໃນສັນຍາພັດທະນານິຄົມອຸດສາຫະກຳ.

ມາດຕາ 42 ນະໂຍບາຍອື່ນ

ຜູ້ພັດທະນານິຄົມອຸດສາຫະກຳໄດ້ຮັບນະໂຍບາຍອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ນະໂຍບາຍສົ່ງເສີມຕໍ່ຜູ້ລົງທຶນໃນນິຄົມອຸດສາຫະກຳ

ມາດຕາ 43 ນະໂຍບາຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ

ຜູ້ລົງທຶນໃນນິຄົມອຸດສາຫະກຳ ໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນ ດັ່ງນີ້:

1. ການນຳເຂົ້າວັດຖຸປະກອບທີ່ບໍ່ສາມາດສະໜອງ ຫຼື ຜະລິດໄດ້ໃນ ສປປ ລາວ ເພື່ອເປັນຊັບສິນບັດຄົງທີ່ ແລະ ພາຫະນະກົນຈັກຮັບໃຊ້ການຜະລິດໂດຍກົງ ຈະໄດ້ຮັບການຍົກເວັ້ນ ພາສີ ແລະ ອາກອນມູນຄ່າເພີ່ມ; ສ່ວນການນຳເຂົ້າ ນ້ຳມັນເຊື້ອໄຟ, ອາຍແກັສ, ນ້ຳມັນຫຼໍ່ລື່ນ, ພາຫະນະຮັບໃຊ້ບໍລິຫານ ແລະ ວັດຖຸປະກອບອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ. ສຳລັບການນຳເຂົ້າຊົ່ວຄາວ ພາຫະ ນະກົນຈັກ ຕ້ອງໄດ້ປະຕິບັດຕາມກົດໝາຍວ່າດ້ວຍພາສີ;
2. ການນຳເຂົ້າ ວັດຖຸດິບ, ແຮ່ທາດ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ທີ່ຮັບໃຊ້ການຜະລິດ ເພື່ອສົ່ງອອກ ຈະໄດ້ຮັບການຍົກເວັ້ນພາສີ ແລະ ອາກອນມູນຄ່າເພີ່ມ. ກໍລະນີນຳເຂົ້າມາຮັບໃຊ້ການຜະລິດເພື່ອຈຳໜ່າຍພາຍໃນ ແມ່ນໃຫ້ເກັບພາສີ, ອາກອນ ຕາມກົດໝາຍທີ່ກ່ຽວຂ້ອງກຳນົດ;
3. ການນຳໃຊ້ວັດຖຸດິບ, ວັດຖຸປະກອບ ແລະ ຊິ້ນສ່ວນປະກອບ ຢູ່ພາຍໃນ ທີ່ຮັບໃຊ້ການຜະລິດເປັນຜະລິດຕະພັນສຳເລັດຮູບ ຫຼື ເຄິ່ງສຳເລັດຮູບ ເພື່ອສົ່ງອອກ ຖືກຍົກເວັ້ນອາກອນມູນຄ່າເພີ່ມ.

**ມາດຕາ 44 ນະໂຍບາຍສົ່ງເສີມດ້ານການນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບ**

ຜູ້ລົງທຶນໃນນິຄົມອຸດສາຫະກຳ ໄດ້ຮັບນະໂຍບາຍດ້ານການນຳໃຊ້ທີ່ດິນ ແລະ ອະສັງຫາລິມະຊັບດັ່ງນີ້:

1. ຜູ້ລົງທຶນ ມີສິດນຳໃຊ້ທີ່ດິນທີ່ຕົນໄດ້ເຊົ່າ ຫຼື ຊື້ສິດນຳໃຊ້ທີ່ດິນ ໂດຍສາມາດເອົາສິດດັ່ງກ່າວໃຫ້ເຊົ່າຕໍ່ ຫຼື ມອບໂອນໃຫ້ຜູ້ລົງທຶນອື່ນ ຕາມອາຍຸສັນຍາເຊົ່າ ແຕ່ສູງສຸດບໍ່ໃຫ້ເກີນອາຍຸສັນຍາພັດທະນາທີ່ຍັງເຫຼືອ ໂດຍມີການຢັ້ງຢືນຂອງຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ຫຼື ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
2. ຜູ້ໄດ້ກຳມະສິດໃນອະສັງຫາລິມະຊັບ ຢູ່ໃນນິຄົມອຸດສາຫະກຳ ເປັນເຈົ້າຂອງກຳມະສິດໄປຕະລອດ ແລະ ສາມາດນຳເອົາອະສັງຫາລິມະຊັບທີ່ຕົນໄດ້ສິດ ຕາມອາຍຸຂອງການນຳໃຊ້ອະສັງຫາລິມະຊັບ ຊຶ່ງສາມາດຂາຍ, ມອບ, ໂອນ ຫຼື ສືບທອດຕໍ່ໄດ້, ສ່ວນທີ່ດິນບ່ອນທີ່ອະສັງຫາລິມະຊັບນັ້ນຕັ້ງຢູ່ ເມື່ອໝົດອາຍຸສັນຍາພັດທະນາແລ້ວ ແມ່ນຕົກເປັນຊັບສິນຂອງລັດ ຫຼື ຂອງເຈົ້າກຳມະສິດທີ່ດິນ ຊຶ່ງເຈົ້າກຳມະສິດຂອງອະສັງຫາລິມະຊັບນັ້ນ ສາມາດເຊົ່າຕໍ່ທີ່ດິນດັ່ງກ່າວ ຫຼື ດ້ວຍວິທີການອື່ນທີ່ຖືກຕ້ອງຕາມກົດໝາຍ;
3. ຄົນຕ່າງປະເທດທີ່ມີສັນຍາເຊົ່າອະສັງຫາລິມະຊັບ ຈາກເຈົ້າຂອງກຳມະສິດ ແລະ ມີກຳນົດເວລາຢູ່ ສປປ ລາວ ສາມເດືອນຂຶ້ນໄປ ຈະໄດ້ຮັບນະໂຍບາຍວີຊາເຂົ້າ-ອອກຫຼາຍເທື່ອ.

**ມາດຕາ 45 ນະໂຍບາຍອື່ນ**

ຜູ້ລົງທຶນໃນນິຄົມອຸດສາຫະກຳໄດ້ຮັບນະໂຍບາຍອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 46 ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ອອກໃບອະນຸຍາດນຳໃຊ້ ຫຼື ພັດທະນາທີ່ດິນໃນເຂດອຸດສາຫະກຳ ທີ່ບໍ່ຢູ່ໃນຂອບເຂດສິດ ແລະ ໜ້າທີ່ຂອງຕົນ;
2. ສ້າງອຸປະສັກ, ກີດຂວາງ ຫຼື ຂັດຂວາງ ທຸກຮູບແບບ ຕໍ່ວຽກງານການພັດທະນາ ແລະ ລົງທຶນໃນເຂດ ແລະ ນິຄົມອຸດສາຫະກຳ;
3. ມີພຶດຕິກຳອື່ນທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 47 ຂໍ້ຫ້າມສຳລັບຜູ້ພັດທະນາ**

ຫ້າມຜູ້ພັດທະນາມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດບໍ່ຖືກຕ້ອງ ຕາມການອະນຸຍາດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ນຳໃຊ້ນິຄົມອຸດສາຫະກຳເຂົ້າໃນເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກພາກສ່ວນທີ່ກ່ຽວຂ້ອງ;
3. ເອົາໃບອະນຸຍາດສ້າງຕັ້ງນິຄົມອຸດສາຫະກຳ ໃຫ້ຜູ້ອື່ນເຊົ່າ, ນຳໃຊ້ ຫຼື ໂອນໃຫ້ບຸກຄົນອື່ນ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;
4. ພັດທະນາ ພື້ນຖານໂຄ່ງລ່າງຂອງນິຄົມອຸດສາຫະກຳ ບໍ່ສອດຄ່ອງ ບໍ່ຖືກຕ້ອງກັບແຜນຜັງເຕັກນິກ ທີ່ໄດ້ຮັບຮອງ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 48 ຂໍ້ຫ້າມສຳລັບຜູ້ລົງທຶນ**

ຫ້າມຜູ້ລົງທຶນມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດບໍ່ຖືກຕ້ອງ ຕາມການອະນຸຍາດ, ກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່ ແລະ ພະນັກງານ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດທີ່ຂັດກັບກົດໝາຍ ແລະ ລະບຽບການ;
3. ປອມແປງເອກະສານ, ປິດບັງຂໍ້ມູນຄວາມຈິງ, ຫຼົບຫຼີກການປະຕິບັດພັນທະ, ປິດບັງລາຍຮັບ, ກຳໄລ ແລະ ເຊື່ອງອຳການກະທຳຜິດ ທີ່ຕິດພັນກັບການເສຍພາສີ ແລະ ອາກອນ;
4. ສ້າງຕັ້ງ, ຍົກຍ້າຍ, ປ່ຽນຊື່ໂຮງງານ, ຂາຍ, ເຊົ່າ ຫຼື ປ່ຽນຜູ້ດຳເນີນກິດຈະການໂຮງງານ ແລະ ດຳເນີນກິດຈະການໂຮງງານ ໂດຍບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
5. ນຳ ເຂົ້າວັດຖຸດິບ, ວັດຖຸປະກອບ ມາໃນນິຄົມອຸດສາຫະກຳ ແລະ ສິ່ງອອກຜະລິດຕະພັນ ໂດຍບໍ່ໄດ້ຮັບອະນຸຍາດ;
6. ນຳໃຊ້ແຮງງານ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
7. ປ່ອຍ ຫຼື ຖິ້ມສິ່ງເສດເຫຼືອທີ່ບໍ່ໄດ້ຜ່ານຂະບວນການບຳບັດຕາມກົດໝາຍ ແລະ ລະບຽບການ;
8. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 49 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ແລະ ພະນັກງານ**

ຫ້າມເຈົ້າໜ້າທີ່ ແລະ ພະນັກງານມີພຶດຕິກຳ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຜົນປະໂຫຍດສ່ວນຕົວ;
2. ສົມຮູ້ຮ່ວມຄິດ, ເອື້ອອຳນວຍຄວາມສະດວກໃຫ້ແກ່ຜູ້ລົງທຶນ ໃນເຂດອຸດສາຫະກຳ, ຜູ້ພັດທະນາ ແລະ ຜູ້ລົງທຶນໃນນິຄົມອຸດສາຫະກຳ ເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດ ທີ່ຂັດກັບກົດໝາຍ ແລະ ລະບຽບການ;
3. ຮັບສິນບົນຈາກຜູ້ລົງທຶນໃນເຂດອຸດສາຫະກຳ, ຜູ້ພັດທະນາ ແລະ ລົງທຶນໃນນິຄົມອຸດສາຫະກຳ;
4. ແກ່ຍາວເວລາ ຫຼື ກົດໜ່ວງການພິຈາລະນາເອກະສານຕ່າງໆ ຂອງຜູ້ລົງທຶນໂດຍບໍ່ມີເຫດຜົນ;
5. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ພາກທີ VII
## ອົງການຄຸ້ມຄອງ ແລະ ກວດການິຄົມອຸດສາຫະກຳ

**ມາດຕາ 50 ອົງການຄຸ້ມຄອງ**

ລັດຖະບານເປັນຜູ້ຄຸ້ມຄອງ ວຽກງານ ເຂດ ແລະ ນິຄົມອຸດສາຫະກຳ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຮັບຜິດຊອບໂດຍກົງ ທັງເປັນເຈົ້າການປະສານສົມທົບກັບບັນດາຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງວຽກງານ ເຂດ ແລະ ນິຄົມອຸດສາຫະກຳ ປະກອບມີ:

1. ກະຊວງອຸດສາຫະກຳ ແລະ ການຄ້າ;
2. ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;
3. ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ;
4. ອົງການປົກຄອງທ້ອງຖິ່ນ;
5. ຂະແໜງການອື່ນ.

**ມາດຕາ 51 ສິດ ແລະ ໜ້າທີ່ຂອງກະຊວງອຸດສາຫະກຳ ແລະ ການຄ້າ**

ໃນການຄຸ້ມຄອງວຽກງານຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກຳ ກະຊວງຊວງອຸດສາຫະກຳ ແລະ ການຄ້າ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ, ກຳນົດນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ, ແຜນພັດທະນາລະບົບພື້ນຖານໂຄງລ່າງຕ່າງໆ ລວມທັງສົ່ງເສີມການລົງທຶນໃນເຂດອຸດສາຫະກຳໃນຂອບເຂດທົ່ວປະເທດ ເພື່ອສະເໜີຕໍ່ລັດຖະບານພິຈາລະນາ;
2. ໂຄສະນາ, ເຜີຍແຜ່ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກຳ ໃນຂອບເຂດທົ່ວປະເທດ;
3. ຄົ້ນຄວ້າກ່ຽວກັບການສ້າງຕັ້ງ ຫຼື ຍຸບເລີກ ເຂດ ແລະ ນິຄົມ ອຸດສາຫະກຳເພື່ອສະເໜີລັດຖະບານພິຈາລະນາ;
4. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ, ປະສານສົມທົບກັບຂະແໜງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວເຂດ ແລະ ນິຄົມອຸດສາຫະກຳ;
5. ຄົ້ນຄວ້າ ແລະ ສະເໜີມາດຕາການ ແລະ ວິທີແກ້ໄຂ ໃນການປະຕິບັດວຽກງານເຂດອຸດສາຫະກຳ ໃຫ້ມີຄວາມຈະແຈ້ງ, ໂປ່ງໃສ ແລະ ສອດຄ່ອງກັບກົດໝາຍ ແລະ ລະບຽບການ;
6. ຄົ້ນຄວ້າ ແລະ ສະເໜີແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງບຸກຄະລະກອນ ຂອງພາກລັດທີ່ປະກອບເຂົ້າໃນຄະນະຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ;
7. ຄຸ້ມຄອງບໍລິຫານ, ຊຸກຍູ້ສົ່ງເສີມ ເຂດ ແລະ ນິຄົມອຸດສາຫະກຳ ໂດຍປະສານສົມທົບກັບຜູ້ພັດທະນາ ແລະ ລົງທຶນ ເພື່ອກຳນົດໃຫ້ສອດຄ່ອງກັບສະພາບຕົວຈິງແຕ່ລະໄລຍະ ເພື່ອນຳສະເໜີລັດຖະບານຮັບຮອງ;
8. ຮັບຮອງແຜນພັດທະນາເຂດ ແລະ ນິຄົມອຸດສາຫະກຳ, ປະເມີນຄວາມເປັນໄປໄດ້ທາງດ້ານເສດຖະກິດເຕັກນິກ ໃນການພັດທະນານິຄົມ ແລະ ອຸດສາຫະກຳ ຕາມການສະເໜີຂອງຜູ້ພັດທະນາ ແລະ ຜູ້ລົງທຶນ, ການເຈລະຈາ ແລະ ສ້າງຮ່າງສັນຍາຮ່ວມທຶນ;
9. ປະສານສົມທົບກັບພາກສ່ວນກ່ຽວຂ້ອງແລະອົງການປົກຄອງທ້ອງຖິ່ນກຳນົດຈັດສັນເນື້ອທີ່ດິນທີ່ເໝາະສົມໃນການສ້າງຕັ້ງ ແລະ ພັດທະນາເຂດ ແລະ ນິຄົມອຸດສາຫະກຳ;

10. ໂຄສະນາເຜີຍແຜ່ຂໍ້ມູນ ແລະລະດົມຂົນຂວາຍຊ່ອຍຜູ້ພັດທະນາໃນການດຶງດູດເອົາການລົງທຶນທັງພາຍໃນ ແລະ ຕ່າງປະເທດ ເຂົ້າໃນເຂດ ແລະ ນິຄົມອຸດສາຫະກຳ;
11. ຄົ້ນຄວ້າ ຊອກຫາແຫຼ່ງທຶນ ເພື່ອພັດທະນາໂຄງລ່າງພື້ນຖານເຊື່ອມຕໍ່ກັບເຂດ ແລະ ນິຄົມອຸດສາຫະກຳ;
12. ປະສານສົມທົບກັບຂະແໜງການກ່ຽວຂ້ອງ ແລະ ອົງການຈັດຕັ້ງສາກົນໃນວຽກງານສົ່ງເສີມ ແລະ ຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກຳ ໃຫ້ມີປະສິດທິຜົນ;
13. ສ້າງຄູ່ມືດ້ານເຕັກນິກລວມ ກ່ຽວກັບການຈັດສັນພື້ນທີ່, ການອອກແບບ ຫຼື ວາງລະບົບລວມ ຂອງເຂດ ແລະ ນິຄົມອຸດສາຫະກຳ;
14. ໃຫ້ຄຳປຶກສາ, ແນະນຳ, ຍົກລະດັບ ແລະໃຫ້ການຝຶກອົບຮົມດ້ານວິຊາການໃຫ້ຂັ້ນທ້ອງຖິ່ນ ແລະ ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງ ເຂດ ແລະ ນິຄົມອຸດສາຫະກຳ;
15. ສະຫຼຸບ, ສັງລວມ, ຕີລາຄາປະເມີນຜົນ ແລະ ລາຍງານການເຄື່ອນໄຫວວຽກງານ ເຂດ ແລະ ນິຄົມອຸດສາຫະກຳ ໃຫ້ລັດຖະບານຢ່າງເປັນປົກກະຕິ;
16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຂັ້ນເທິງ ກ່ຽວກັບວຽກງານເຂດ ແລະ ນິຄົມ ອຸດສາຫະກຳ.

**ມາດຕາ 52 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ**

ໃນການຄຸ້ມຄອງວຽກງານເຂດ ແລະ ນິຄົມອຸດສາຫະກຳ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ຫຼື ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍວຽກງານການສົ່ງເສີມ ແລະ ຄຸ້ມຄອງການພັດທະນາເຂດອຸດສາຫະກຳ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງກະຊວງ;
2. ຄົ້ນຄວ້າ ແລະ ພິຈາລະນາໃນການອະນຸມັດເອກະສານຂໍລົງທຶນ, ສ້າງຕັ້ງ ແລະ ດຳເນີນກິດຈະການໂຮງງານອຸດສາຫະກຳປຸງແຕ່ງ ໃນເຂດອຸດສາຫະກຳ ຕາມພາລະບົດບາດ ແລະ ຕາມການແບ່ງຂັ້ນຄຸ້ມຄອງ;
3. ຊຸກຍູ້, ຕິດຕາມ ແລະ ກວດກາການລົງທຶນ, ການດຳເນີນກິດຈະການຂອງໂຮງງານທີ່ຕັ້ງຢູ່ໃນເຂດອຸດສາຫະກຳ ເພື່ອໃຫ້ດຳເນີນຖືກຕ້ອງຕາມແຜນການທີ່ໄດ້ອະນຸຍາດ ແລະ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ການປົກປັກຮັກສາສິ່ງ ແວດລ້ອມ ແລະ ການພັດທະນາແບບຍືນຍົງ;
4. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສາຍຕັ້ງ ແລະ ສາຍຂວາງ ເພື່ອຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ຄຸ້ມຄອງເຂດອຸດສາຫະກຳ ໃຫ້ມີປະສິດທິຜົນ;
5. ປະສານສົມທົບກັບພະແນກການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ສຶກສາ, ຄັດເລືອກ, ກຳນົດຂອບເຂດດິນທີ່ເໝາະສົມ ແລະ ປັກຫຼັກໝາຍຈຸດທີ່ຕັ້ງຂອບເຂດບໍລິເວນຂອງເຂດອຸດສາຫະກຳ ແລ້ວສະເໜີຕໍ່ເຈົ້າ ແຂວງ, ເຈົ້າຄອງນະຄອນຫຼວງ ອອກຂໍ້ຕົກລົງຮັບຮອງເປັນເຂດອຸດສາຫະກຳ ຂອງແຂວງ, ນະຄອນຫຼວງ ແລ້ວ ນຳສະເໜີຫັນປ່ຽນປະເພດທີ່ດິນ ຕາມກົດໝາຍ ແລະ ລະບຽບການ;
6. ສ້າງແຜນແມ່ບົດພັດທະນາເຂດອຸດສາຫະກຳ, ຂຶ້ນແຜນການຊົດເຊີຍ-ເວນຄືນ ຂອບເຂດພື້ນທີ່ກຳນົດ ເພື່ອພັດ ທະນາດ້ານພື້ນຖານໂຄງລ່າງທີ່ຈຳເປັນ ເພື່ອຮອງຮັບການລົງທຶນສ້າງຕັ້ງໂຮງງານ ແລະ ກິດຈະການສະໜັບສະໜູນອື່ນໆ ທີ່ຮັບໃຊ້ໃຫ້ແກ່ການດຳເນີນກິດຈະການອຸດສາຫະກຳປຸງແຕ່ງ;

7. ເປັນເຈົ້າການປະສານສົມທົບກັບພະແນກຊັບ ພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ອົງການປົກຄອງທ້ອງຖິ່ນ ດຳເນີນການຊົດເຊີຍ-ເວນຄືນ ເພື່ອທົດແທນຄ່າເສຍຫາຍ ຕໍ່ຜູ້ໄດ້ຮັບຜົນກະທົບຈາກການກຳນົດ ແລະ ພັດທະນາເຂດອຸດສາຫະກຳ;
8. ລາຍງານສະພາບການພັດທະນາເຂດອຸດສາຫະກຳໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຊາບເປັນແຕ່ລະໄລຍະ;
9. ນຳໃຊ້ສິດສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງກັບວຽກງານເຂດອຸດສາຫະກຳ.

**ມາດຕາ 53 ສິດ ແລະ ໜ້າທີ່ ຂອງຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ**

ໃນການຄຸ້ມຄອງວຽກງານນິຄົມອຸດສາຫະກຳ ຫ້ອງການຄຸ້ມຄອງບໍລິຫານນິຄົມອຸດສາຫະກຳ ມີສິດ ແລະ ໜ້າທີ່ດັ່ງນີ້:

1. ຈັດຕັ້ງຜັນຂະຫຍາຍວຽກງານການສົ່ງເສີມ ແລະ ຄຸ້ມຄອງການພັດທະນານິຄົມອຸດສາຫະກຳ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງກະຊວງ;
2. ຊຸກຍູ້, ຕິດຕາມ ແລະ ກວດກາການພັດທະນາ, ການດຳເນີນງານຂອງນິຄົມອຸດສາຫະກຳ, ການດຳເນີນກິດຈະການຂອງໂຮງງານທີ່ຕັ້ງຢູ່ໃນນິຄົມອຸດສາຫະກຳ ເພື່ອໃຫ້ດຳເນີນຖືກຕ້ອງຕາມແຜນການທີ່ໄດ້ອະນຸຍາດ ແລະ ຮັບປະກັນຄວາມເປັນລະບຽບຮຽບຮ້ອຍ, ການປົກປັກຮັກສາສິ່ງແວດລ້ອມ ແລະ ການພັດທະນາແບບຍືນຍົງ;
3. ໃຫ້ບໍລິການປະຕູດຽວ ຊຸກຍູ້ຊ່ວຍເຫຼືອ ແກ່ຜູ້ພັດທະນາ ແລະ ຜູ້ລົງທຶນໃນນິຄົມ ເພື່ອໃຫ້ມີຄວາມສະດວກໃນການດຳເນີນທຸລະກິດ;
4. ຄົ້ນຄວ້າ ແລະ ພິຈາລະນາໃນການອະນຸມັດເອກະສານຕ່າງໆ ເປັນຕົ້ນ ການຂຶ້ນທະບຽນວິສາຫະກິດ, ການດຳເນີນທຸລະກິດ, ການດຳເນີນກິດຈະການໂຮງງານ; ການຢັ້ງຢືນແຜນການນຳເຂົ້າປະຈຳປີ, ໃບອະນຸຍາດສິດນຳໃຊ້ທີ່ດິນ, ໃບອະນຸຍາດປຸກສ້າງ, ໃບຢັ້ງຢືນສິ່ງແວດລ້ອມເບື້ອງຕົ້ນ, ໃບຢັ້ງຢືນແຫຼ່ງກຳເນີດສິນຄ້າ.
5. ຄຸ້ມຄອງ, ຕິດຕາມ ແລະ ຢັ້ງຢືນການນຳເຂົ້າເຄື່ອງຈັກ, ວັດຖຸດິບ, ວັດຖຸ-ອຸປະກອນ, ພາຫານະຮັບໃຊ້ການຜະລິດ, ວັດສະດຸກໍ່ສ້າງ ແລະ ການສົ່ງອອກສິນຄ້າ;
6. ຕິດຕາມການເກັບ ແລະ ການມອບພັນທະຕ່າງໆ ຂອງຜູ້ພັດທະນາ ແລະ ຜູ້ລົງທຶນ ໃຫ້ແກ່ລັດຖະບານຕາມລະບຽບການ ແລະ ເວລາທີ່ກຳນົດ;
7. ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສາຍຕັ້ງ ແລະ ສາຍຂວາງ ເພື່ອຈັດຕັ້ງປະຕິບັດວຽກງານສົ່ງເສີມ ແລະ ຄຸ້ມຄອງນິຄົມອຸດສາຫະກຳ ໃຫ້ມີປະສິດທິຜົນ;
8. ລາຍງານສະພາບການພັດທະນານິຄົມອຸດສາຫະກຳ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ຊາບເປັນແຕ່ລະໄລຍະ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງກະຊວງອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງກັບວຽກງານນິຄົມອຸດສາຫະກຳ.

**ມາດຕາ 54 ສິດ ແລະ ໜ້າທີ່ຂອງອົງການປົກຄອງທ້ອງຖິ່ນ**

1. ໃນການຄຸ້ມຄອງວຽກງານເຂດ ແລະ ນິຄົມອຸດສາຫະກຳ ອົງການປົກຄອງທ້ອງຖິ່ນບ່ອນເຂດ ແລະ ນິຄົມອຸດສາຫະກຳ ຕັ້ງຢູ່ ມີສິດ ແລະ ໜ້າທີ່ ດັ່ງນີ້:

2. ໂຄສະນາ, ເຜີຍແຜ່ກົດໝາຍ, ລະບຽບການ, ນະໂຍບາຍການພັດທະນາເຂດ ແລະ ນິຄົມອຸດສາຫະກຳ ໃຫ້ປະຊາຊົນຮັບຮູ້ ແລະ ໃຫ້ການສະໜັບສະໜູນ;
3. ຊີ້ນຳ, ຕິດຕາມ ແລະ ອຳນວຍຄວາມສະດວກໃຫ້ ເຂດ ແລະ ນິຄົມອຸດສາຫະກຳ ທີ່ຢູ່ໃນທ້ອງຖິ່ນຂອງຕົນໄດ້ເຄື່ອນໄຫວອວຽກງານ;
4. ສຳຫຼວດ, ຈັດສັນ ແລະ ປະເມີນກ່ຽວກັບບັນຫາທີ່ດິນ ເພື່ອແກ້ໄຂ, ໃຊ້ແທນຄ່າເສຍຫາຍຕໍ່ຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການດັ່ງກ່າວ;
5. ປະສານສົມທົບກັບອົງການຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກຳເພື່ອອຳນວຍຄວາມສະດວກ ແລະ ແກ້ໄຂຄວາມຫຍຸ້ງຍາກ ໃນການການພັດທະນາ;
6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 55 ສິດ ແລະ ໜ້າທີ່ຂອງຂະແໜງການອື່ນ**

ໃນການຄຸ້ມຄອງວຽກງານເຂດ ແລະ ນິຄົມອຸດສາຫະກຳ ບັນດາຂະແໜງການ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີປະສານສົມທົບກັບຂະແໜງອຸດສາຫະກຳ ແລະ ການຄ້າ ຕາມພາລະບົດບາດຂອງຕົນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານເຂດ ແລະ ນິຄົມອຸດສາຫະກຳ ຕາມໄດ້ກຳນົດໄວ້ໃນດຳລັດສະບັບນີ້, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

**ມາດຕາ 56 ການກວດກາ**

ອົງການກວດກາພາຍໃນ ແມ່ນອົງການດຽວກັນກັບອົງການຄຸ້ມຄອງວຽກງານຄຸ້ມຄອງເຂດ ແລະ ນິຄົມອຸດສາຫະກຳປຸງແຕ່ງ ຕາມທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້.

ການກວດກາວຽກງານເຂດ ແລະ ນິຄົມອຸດສາຫະກຳ ໂດຍຫຼັກການ ແມ່ນໃຫ້ປະຕິບັດຕາມກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ ແລະ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

## ພາກທີ VIII
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 57 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ການລົງທຶນໃນເຂດອຸດສາຫະກຳ, ການພັດທະນາ ແລະ ການລົງທຶນ ໃນນິຄົມອຸດສາຫະກຳ ທີ່ມີປະສິດທິຜົນ ຕາມເນື້ອໃນທີ່ໄດ້ກຳນົດໄວ້ໃນດຳລັດສະບັບນີ້ ຈະໄດ້ຮັບການຍ້ອງຍໍ ແລະ ສົ່ງເສີມ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 58 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວລະເມີດຕໍ່ເນື້ອໃນຂອງດຳລັດສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ປະຕິບັດມາດຕະການທາງວິໄນ, ປັບໃໝທາງແພ່ງ ຫຼື ລົງໂທດທາງອາຍາ ຕາມແຕ່ລະກໍລະນີທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍອຸດສາຫະກຳປຸງແຕ່ງ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.

## ພາກທີ IX
## ບົດບັນຍັດສຸດທ້າຍ

**ມາດຕາ 59 ການຈັດຕັ້ງປະຕິບັດ**

ກະຊວງອຸດສາຫະກຳ ແລະ ການຄ້າ ເປັນໃຈກາງປະສານສົມທົບກັບກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ກະຊວງ, ອົງການທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ອົງການອື່ນ ທາງພາກລັດ ແລະ ເອກະຊົນ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 60 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງໄດ້ພິມລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ກຳນົດ, ບົດບັນຍັດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ເຂດ ແລະ ນິຄົມອຸດສາຫະກຳ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນການ ຈາກລັດຖະບານກ່ອນໜ້ານີ້ ແມ່ນໃຫ້ປະຕິບັດຕາມສັນຍາ ທີ່ໄດເຊັນກັບລັດຖະບານ.

**ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**